# ບົດລາຍງານວິທີປະຕິບັດ SIREN

**ຍຸດທະສາດ ການຕອບໂຕ້ ດ້ວຍເຄືອຂ່າຍຂໍ້ມູນຂ່າວສານ**

**ໂຄງການເຄືອຂ່າຍ ຕ້ານການຄ້າມະນຸດ ຂອງອົງການ ສະຫະປະຊາຊາດ (UNIAP) ໄລຍະ III**

**ບາງກອກ, ປະເທດ ໄທ**

22 ກັນຍາ 2008 — ອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS) 06

# ການກວດຄົ້ນ, ການຊ່ວຍເຫຼືອ, ການແກ້ໄຂບັນຫາ

## ເຄື່ອນຍ້າຍຜູ້ຖືກເຄາະຮ້າຍຈາກສະຖານທີ່ ຊຶ່ງມີການຂູດຮີດທາງເພດ ແລະ ຂູດຮີດແຮງງານ

*ສະເໜີໂດຍລວມ ກ່ຽວກັບເຫດການ: ໃນວັນທີ 6 ເຖິງ 7 ສິງຫາ 2008, ຄວາມຄິດລິເລີ່ມ ຂອງອົງການ UNIAP, ILO ແລະ ຂອງລັດຖະບານ ອົສຕາລີ: ໂຄງການຕ້ານການຄ້າມະນຸດໃນພາກພື້ນອາຊີ (ARTIP) ໄດ້ຈັດການປຶກສາຫາລືທາງວິຊາການຂອງນັກວິຊາການ 30 ຄົນ ທີ່ບາງກອກ–ສ່ວນໃຫ່ຍແມ່ນຜູ້ບັງຄັບໃຊ້ກົດໝາຍ, ໄອຍາການ, ແລະ ຜູ້ຊ່ຽວຊານຕ້ານການຄ້າມະນຸດ ຂອງອາຊີ – ຊຶ່ງໄດ້ສົນທະນາ ກ່ຽວກັບການກວດຄົ້ນ ແລະ ການຊ່ວຍເຫຼືອ ແລະ ກ່ຽວກັບວິທີທີ່ຈະມີບົດບາດໃນວົງກວ້າງ ໃນການຕ້ານການຄ້າ ແລະ ຂູດຮີດທາງເພດ ແລະແຮງງານ; ໃນເວລາທີ່ ຄວາມສ່ຽງໃນການ ກວດຄົ້ນ/ການຊ່ວຍເຫຼືອ ຫຼາຍເກີນກວ່າຜົນທີ່ຈະໄດ້; ຈະມີການກວດຄົ້ນແນວໃດທີ່ດີກວ່າ ເຊິ່ງມີຜົນສຳເລັດຫຼາຍກວ່າ ແລະພ້ອມທັງທາງເລືອກອື່ນສຳຫຼັບການກວດຄົ້ນ. ຊ່ຽວຊານແມ່ນມາຈາກສາມອົງການຈັດຕັ້ງທີ່ໃຫ້ການສະໜັບສະໜູນ ແລະ ໜ່ວຍງານຍຸຕິທຳສາກົນ, ມູນລະນິທິເພື່ອນປ່າ, ຕຳຫຼວດອັງກິດ/ໜ່ວຍງານ Pentameter II, ກະຊວງຍຸຕິທຳ ຂອງສະຫະລັດ, ອົງການ IOM ແລະ UNODC.*

*ມື້ທຳອິດ, ໄດ້ມີການສະເໜີໂດຍສັງເຂດບາງບົດ ກ່ຽວກັບການກວດຄົ້ນສະຖານບໍລິການທາງເພດ ແລະ ໂຮງງານ ຢູ່ ອາຊີ, ເອີຣົບ ແລະ ອາເມລິກາລາຕິນ; ການວິໄຈການກວດຄົ້ນທີ່ມີການບັນທຶກພາບໄວ້; ການສຶກສາກົດໝາຍ ແລະ ລະບຽບການກ່ຽວຂ້ອງ; ແລະ ສົນທະນາກ່ຽວກັບການປະເມີນຄວາມສ່ຽງ ແລະ ຜົນກະທົບ ຕໍ່ຜູ້ຖືກເຄາະຮ້າຍໃນໄລຍະສັ້ນ ແລະ ໄລຍະຍາວ, ສຳລັບຜູ້ທີ່ຖືກຊ່ວຍເຫຼືອແລ້ວ ແລະ ທີ່ຍັງເຫຼືອຢູ່ (ຖ້າຍັງມີ). ມື້ທີສອງ, ເລີ່ມຕົ້ນດ້ວຍ ການສະເໜີໂດຍສັງເຂບດ້ານວິຊາການ ກ່ຽວກັບບູລິມະສິດ ແລະ ສິ່ງທ້າທາຍຂອງແຕ່ລະປະເທດຢູ່ອາຊີ, ລວມທັງຄວາມອາດສາມາດ ແລະ ການສໍ້ລາດບັງຫຼວງ ຂອງກະຊວງຍຸດຕິທຳ ແລະ ກະຊວງແຮງງານ. ການສະເໜີໂດຍສັງເຂບສຸດທ້າຍ ນຳໄປສູ່ການວາງແຜນ ຍຸດທະສາດຕໍ່ສູ້ຂັ້ນຕອນສຸດທ້າຍ (Strategic Planning Wars)[1], ຊຶ່ງບັນ ດາຊ່ຽວຊານໄດ້ຖືກແບ່ງອອກເປັນສີ່ທີມທີ່ແຂ່ງຂັນກັນອອກແບບແຜນການສອງປີ ທີ່ມີປະສິດທິຜົນທີ່ສຸດ ຊຶ່ງມີມູນຄ່າ 5 ລ້ານ ໂດລາ ເພື່ອປັບປຸງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຂູດຮີດ ຢູ່ອາຊີຕາເວັນອອກສ່ຽງໃຕ້. ບົດລາຍງານສະບັບນີ້ແມ່ນໝວດທຳອິດ ຂອງບົດລາຍງານ SIREN ຊຶ່ງຈະສະເໜີປະເດັນ ສຳຄັນທີ່ມີຄວາມເຫັນເປັນເອກະພາບກັນຜ່ານຈາກການປຶກສາຫາລື, ພ້ອມດ້ວຍບົດລາຍງານສະບັບຕໍ່ມາກ່ຽວກັບລາຍລະອຽດ*

[1] ເຕັກນິກທີ່ສ້າງຂຶ້ນໃນກອງປະຊຸມ ທີ່ນຳໃຊ້ການແຂ່ງຂັນຂອງທີມ ທີ່ປະກອບດ້ວຍຜູ້ເຂົ້າຮ່ວມທີ່ມີທັກສະດ້ານວິຊາການ ເພື່ອພັດທະນາການອອກແບບໂຄງການ ຊຶ່ງໄດ້ນຳສະເໜີ ແລະຕີລາຄາ ໂດຍບັນດາເພື່ອນຮ່ວມງານຈາກອົງການຈັດຕັ້ງອື່ນ.

*ຜົນຂອງການວາງແຜນຍຸດທະສາດການຕໍ່ສູ້, ແລະ ກໍລະນີສຶກສາຈາກອົງການຈັດຕັ້ງຕ່າງໆ ທີ່ເຂົ້າຮ່ວມກອງປະຊຸມ.*

## *ເປັນຫຍັງກອງປະຊຸມຄັ້ງນີ້ ຈຶ່ງເປັນເຫດການທີ່ສຳຄັນ?*

ການດຳເນີນການບຸກເພື່ອການຊ່ວຍເຫຼືອແມ່ນປະເດັນທີ່ໂຕ້ຖຽງກັນ. ຄຳເຫັນດ້ານໜຶ່ງ, ສິ່ງດັ່ງກ່າວເປັນໜ້າທີ່ຂອງລັດຖະບານ ທີ່ຈະລົງໂທດອາດຊະຍາກຳຄ້າມະນຸດ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ: ບາງຄົນເຫັນວ່າການກະທຳໂດຍກົງ ໂດຍຜ່ານການບຸກເພື່ອການຊ່ວຍເຫຼືອ ເປັນການກະທຳທີ່ເໝາະສົມທີ່ສຸດໃນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ສະກັດກັ້ນບໍ່ໃຫ້ຜູ້ຄ້າມະນຸດກະທຳຜິດອີກໃນອະນາຄົດ. ບາງຄຳເຫັນໂຕ້ຖຽງວ່າ ຜົນຮ້າຍຈາກການບຸກເຂົ້າເພື່ອການຊ່ວຍເຫຼືອ ມີຫຼາຍກວ່າຜົນດີ, ແລະ ການກະທຳ ທີ່ຮຽກວ່າ 'ອ່ອນໂຍນກວ່າ' ແລະ ປອດໄພກວ່າ ຄວນຈະຮັບການປະຕິບັດຖ້າເປັນໄປໄດ້ ເຊັ່ນ ການຕິດຕາມເບິ່ງສະຖານທີ່ເຮັດວຽກ ແລະ ການປອ້ງກັນຂອງຊຸມຊົນ ຫຼື ກຸ່ມເຝົ້າລະວັງ. ພວກເຮົາຕ້ອງວິໄຈ ສິ່ງທີ່ຕ້ອງ ສູນເສຍ, ຜົນໄດ້ຮັບ, ການຊ່ວຍເຫຼືອ ແລະ ຜົນຮ້າຍທີ່ເກີດຈາກການບຸກເຂົ້າເພື່ອການຊ່ວຍເຫຼືອໃນການຄ້າມະນຸດເພື່ອຂູດຮີດທາງເພດ ແລະ ແຮງງານ; ການຄຸ້ມຄອງຄວາມສ່ຽງ ແລະ ກົງໄປກົງມາກ່ຽວກັບສິ່ງເຫຼົ່ານີ້; ແລະ ສ້າງຂອບເຂດວຽກງານ ສຳລັບການກຳນົດການປະຕິບັດງານແບບໂຈມຕີ ທີ່ເປັນການ ປະຕິບັດທີ່ແທດເໝາະ ທີ່ສຸດໃນບາງສະພາບການ.

**ຫົວຂໍ້ຕົ້ນຕໍຫ້າອັນ ຈາກການສົນທະນາໃນລະຫວ່າງການປຶກສາຫາລືທາງວິຊາການ:**

1. ການໂຕ້ຖຽງ ແລະ ການຂາດຄວາມກະຈ່າງແຈ້ງ ກ່ຽວກັບນິຍາມ *ການຄ້າມະນຸດ* ບາງຄັ້ງທັນເຫພວກເຮົາອອກຈາກຄວາມ ກັງວົນເລັ່ງດ່ວນໃນການແກ້ໄຂ***ການຂູດຮີດມະນຸດ* ແລະ *ການເຮັດໃຫ້ຄົນເປັນຂ້າທາດ***, ນຳໃຊ້ການແກ້ໄຂທາງແພ່ງ ແລະ ອາດຍາໃດໜຶ່ງ ຫຼື ທັງໝົດທີ່ມີໃນແຕ່ລະປະເທດ.

2. **ການດຳເນີນການບຸກ/ຊ່ວຍເຫຼືອຄວນຖືກປະຕິບັດ** ພຽງແຕ່ໃນເວລາທີ່ຈຳເປັນຫຼີກລ້ຽງບໍ່ໄດ້ເທົ່ານັ້ນ, ຫຼັງຈາກທີ່ມີການປະເມີນຄວາມສ່ຽງ ແລະການວາງແຜນທີ່ເປັນລະບົບແລ້ວ. ການດຳເນີນການດັ່ງກ່າວມີຄວາມສ່ຽງສູງ. ເຖິງແນວໃດກໍ່ຕາມ, ນອກຈາກການເຄື່ອນຍ້າຍຜູ້ຖືກເຄາະຮ້າຍຈາກຄວາມທຸກແລ້ວ, ເຂົາເຈົ້າອາດມີການຈັບກຸມອາດຊະຍາກອນ ແລະເກັບກຳຫຼັກຖານ ທີ່ອາດຈະບໍ່ສາມາດເກັບກຳໄດ້ຖ້າບໍ່ມີການບຸກເຂົ້າ.

3. **ທາງເລືອກອື່ນນອກຈາກການດຳເນີນການບຸກ/ຊ່ວຍເຫຼືອ ຄວນໄດ້ຮັບການເສີມສ້າງ**, ແລະທາງເລືອກເຫຼົ່ານີ້ ແຕກຕ່າງກັນໄປສຳລັບການຂູດຮີດທາງເພດ ຫຼື ແຮງງານ–ຕົວຢ່າງ: ການຕິດຕາມກວດກາບ່ອນເຮັດວຽກຢ່າງຫ້າວຫັນ ໂດຍເຈົ້າໜ້າທີ່ແຮງງານເປັນອີກທາງເລືອກໜຶ່ງ ສຳລັບການຄ້າແຮງງານ ແຕ່ບໍ່ແມ່ນສຳລັບການຂູດຮີດທາງເພດ.

4. **ການສືບຂ່າວ, ການສືບສວນສອບສວນແບບສືບຂ່າວ** ເປັນກຸນແຈສຳຄັນໃນການແກ້ໄຂການຄ້າ ແລະຂູດຮີດມະນຸດ, ແລະການກຽມຮັບຄວາມສ່ຽງ ທີ່ອາດເກີດຂຶ້ນໃນລະຫວ່າງການຊ່ວຍເຫຼືອ. ສິ່ງເຫຼົ່ານີ້ຍັງເປັນກຸນແຈສຳຄັນນການເຮັດໃຫ້ການຕອບໂຕ້ ກົວຍລະບົບຍຸຕິທຳຕໍ່ອາດຊະຍາກຳຂ້າມຊາດໂດຍທົ່ວໄປເຂັ້ມແຂງຂຶ້ນ. ການສືບສວນສອບສວນແບບສືບຂ່າວລັບ ສາມາດ ຕັດສິນໄດ້ວ່າຍາມໃດຈຳເປັນຕ້ອງມີການດຳເນີນການບຸກ/ຊ່ວຍເຫຼືອ ແລະຍາມໃດ ທີ່ຕ້ອງດຳເນີນການແບບມີການ ໃຊ້ຄວາມຮຸນແຮງໜ້ອຍກວ່າ ອາດມີຄວາມສຳເລັດຫຼາຍຂຶ້ນ, ໃນຂະນະທີ່ ການເກັບກຳວັດຖຸຫຼັກຖານ ທີ່ບໍ່ຕ້ອງເອື່ອຍອີງພະຍານ ຫຼາຍປານໃດ ເພື່ອໃຫ້ ມີຫຼັກຖານຫຼາຍຂຶ້ນ ສຳລັບຄະດີ.

5. ຖ້າການບຸກດຳເນີນໄປ ແລະມີການລະບຸຜູ້ຖືກເຄາະຮ້າຍ, ມັນຈຳເປັນທີ່ຂະບວນການນີ້ ຕ້ອງແກ້ໄຂທຸກບັນຫາ ທີ່ພົວພັນກັບການປົກປ້ອງຜູ້ຖືກເຄາະຮ້າຍ ແລະການລົງໂທດຜູ້ກະທຳຜິດ ນັບແຕ່ຈຸດທີ່ມີການເອົາຜູ້ຖືກເຄາະຮ້າຍອອກຈາກບ່ອນອັນຕະລາຍ ຈົນເຖິງຈຸດທີ່ເຂົາເຈົ້າສືບຕໍ່ກັບຄືນດຳລົງຊີວິດໃນສັງຄົມໄດ້.





*ສະມາຊິກທີມແດງ (ຈາກໂຄງການ ARTIP, IJM, ມູນລະນິທິເພື່ອນປາ, ໜ່ວຍງານຕຳຫຼວດ/ດຳເນີນງານເພັນຕາເມັດເຕີ II, UNIAP ແລະUSDOJ) ກະກຽມການວາງແຜນຍຸດທະສາດການຕໍ່ສູ້ (ດ້ານຊ້າຍ), ຜູ້ເຂົ້າຮ່ວມກຳລັງລໍຖ້າຢູ່ (ດ້ານຂວາ).*

***ຜົນສຳເລັດຂອງການດຳເນີນການບຸກເຂົ້າ/ການຊ່ວຍເຫຼືອ ສາມາດປັບປຸງໄດ້ຢ່າງຫຼວງຫຼາຍໂດຍຜ່ານ ການ ກະກຽມກ່ອນການບຸກ ແລະຫຼັງການບຸກທີ່ເໝາະສົມ***

ໃນຂອບເຂດການດຳເນີນງານຕ້ານການຄ້າມະນຸດ, ການບຸກເຂົ້າ/ການຊ່ວຍເຫຼືອ ສາມາດເປັນສິ່ງທີ່ມີປະສິດທິພາບທີ່ສຸດ ແຕ່ກໍ່ເປັນສິ່ງທີ່ຄົນໂຕ້ຖຽງກັນຫຼາຍທີ່ສຸດ ເນື່ອງຈາກປັດໃຈຕ່າງໆ ເຊັ່ນ ການປະເມີນຄວາມສ່ຽງ ແລະ ການວາງແຜນທີ່ພຽງພໍ, ການສໍ້ລາດບັງຫຼວງ, ການປະຕິບັດຢ່າງບໍ່ຖືກຕ້ອງຕໍ່ຜູ້ຖືກເຄາະຮ້າຍ ແລະ ຄວາມອາດສາມາດຕໍ່າ ຫຼື ຄວາມມຸ້ງໝັ້ນທາງການເມືອງຂອງຕຳຫຼວດ. ການເຂົ້າໄປໃນສະຖານທີ່ຂູດຣີດ ກັບເຈົ້າໜ້າທີ່ ເພື່ອຢຸດຕິການຂູດຣີດສາມາດເຮັດໃຫ້ອາດຊະຍາກຳທີ່ພວມດຳເນີນສິ້ນສຸດລົງ, ພ້ອມທັງນຳຕົວຜູ້ທີ່ຖືກຂູດຣີດໄປສູ່ບ່ອນທີ່ປອດໄພ. ເຖິງແນວໃດກໍ່ຕາມ, ຜົນກະທົບສາມາດ ມີທັງດ້ານບວກ ແລະ ດ້ານລົບ, ພ້ອມກັບ ຄວາມສ່ຽງສຳລັບທຸກຄົນທີ່ມີສ່ວນຮ່ວມ: ຜູ້ທີ່ທຳການບຸກເຂົ້າຊ່ວຍເຫຼືອ, ຜູ້ຖືກຂູດຣີດ, ຜູ້ທີ່ຖືກລົບກວນໃນການເຮັດວຽກ ຍ້ອນການຂາດວັກຂາດຕອນຂອງທຸລະກິດ, ແລະ ຜູ້ທີ່ຄຸມ ແລະ ໄດ້ປະໂຫຍດຈາກການຂູດຣີດ.

ການດຳເນີນການບຸກເຂົ້າ/ການຊ່ວຍເຫຼືອ ເປັນສ່ວນໜຶ່ງ ຂອງການດຳເນີນການລວມ ທີ່ແນໃສ່ການກະທຳ ໂດຍກົງຕ້ານການຂູດຣີດ, ບາງການດຳເນີນງານຄວນມີກ່ອນການບຸກ ແລະ ຢ່າງເປັນປົກກະຕິ, ແລະ ບາງອັນຄວນເກີດຂຶ້ນພາຍຫຼັງການບຸກ. ການດຳເນີນງານເຫຼົ່ານີ້ ມີສາຍພົວພັນກັນ ດັ່ງທີ່ລະບຸໄວ້ໃນແຜນວາດດ້ານລຸ່ມ ແລະ ດັ່ງທີ່ໄດ້ສົນທະນາກັນ ກ່ຽວກັບອົງປະກອບ ດັ່ງລຸ່ມນີ້.




## *1. ລະບົບກ່ອນການບຸກ (ແລະທີ່ດຳເນີນເປັນປະຈຳ)*

***ການກະທຳໂດຍກົງຕ້ານການຄ້າມະນຸດ ບໍ່ສາມາດມີປະສິດທິຜົນໄດ້ໃນໄລຍະຍາວ ປາດສະຈາກລະບົບສືບຂ່າວລັບທີ່ຫ້າວຫັນ ພ້ອມດ້ວຍການຕິດຕາມຂອງຕຳຫຼວດ ແລະພາກສ່ວນອື່ນ ທີ່ບໍ່ແມ່ນຕຳຫຼວດ***

## *ລະບົບສືບຂ່າວລັບ*

ກຸ່ມອາດຊະຍາກອນທີ່ມີການຈັດຕັ້ງທີ່ຄ້າມະນຸດ ໄດ້ຮັບປະໂຫຍດມະຫາສານ ຈາກຜູ້ທີ່ເຂົາເຈົ້າຂູດຮີດ, ແລະ ລະບົບສືບຂ່າວລັບທີ່ສົມບູນ ເປັນກຸນແຈສຳຄັນ ທີ່ຈະແຕ້ມແຜນທີ່ວ່າມີໂອກາດໃດແດ່ ສຳລັບການຢຸດທຸລະກິດທີ່ໄດ້ເງິນມະຫາສານຂອງເຂົາເຈົ້າ. ມັນຍັງອະນຸຍາດໃຫ້ມີການຫັນປ່ຽນຈາກການສືບສວນ – ໃນເຊີງຮັບທີ່ເອື່ອຍອີງການແຈ້ງຄວາມ ແລະ ລາຍງານຈາກຜູ້ຖືກເຄາະຮ້າຍເປັນສ່ວນໃຫຍ່ ມາເປັນການສືບສວນສອບສວນແບບເຊີງລຸກ ເຊິ່ງເຈົ້າໜ້າທີ່ປະຕິບັດກົດໝາຍໄດ້ຮັບຂໍ້ມູນ ຈາກການຕິດຕາມ ອາດ

ຊະຍາກອນທີ່ເປັນເປົ້າໝາຍ, ສ້າງຄະດີເປັນລະບົບ ເພື່ອຈັບກຸມແລະລົງໂທດ ອີງຕາມຈຳນວນຂໍ້ມູນທີ່ມີ. ໜ່ວຍງານຕຳຫຼວດ/ດຳເນີນງານເພັນຕາເມັດເຕີ II ອະທິບາຍລະບົບສືບຂ່າວລັບ ໃນຖານະເປັນການໃຫ້ **'ພາບທີ່ອຸດົມສົມບູນ'** ຂອງສະພາບການຄ້າມະນຸດ, ລວມທັງການເຝົ້າລະວັງ, ຂໍ້ມູນວິທະຍຸສື່ສານ ແລະ ລະບົບບັນຊີທະນາຄານຂອງຜູ້ຖືກສົງໃສ; ການແຕ້ມແຜນທີ່ກຸ່ມອາດຊະຍາກອນ ທີ່ມີການຈັດຕັ້ງ; ຮູບພາບຂອງຜູ້ຖືກສົງໃສ ແລະຜູ້ທີ່ສົງໃສວ່າເປັນຜູ້ຖືກເຄາະຮ້າຍຢູ່ຫ້ອງການຕຳຫຼວດ ຕ.ມ ແລະດ່ານຕ່າງໆ; ປະຊາກອນທີ່ສົງໃສວ່າຈະເປັນເປັນກຸ່ມສ່ຽງ ອີງຕາມສະພາບຊຸມຊົນ ແລະວັດທະນະທຳ. ຊ່ອງທາງຂໍ້ມູນເຫຼົ່ານີ້ໄດ້ ຮັບການວິໄຈ ໂດຍທີມຕຳຫຼວດ. ຂໍ້ມູນທີ່ໄດ້ຈາກບັນດາອົງການ NGO ຕ່າງໆ ໃນປະເທດ ທີ່ເປັນຕົ້ນທາງ, ທາງຜ່ານ ແລະປາຍທາງ ຍັງຖືກນຳໃຊ້ ພ້ອມກັນກັບຂໍ້ມູນຂອງຕຳຫຼວດ.

ອົງການ NGO ຕ່າງໆດີທີ່ສຸດຄວນ ແລກປ່ຽນຂໍ້ມູນນຳກັນກັບບັນດາ ອົງການບັງຄັບປະຕິບັດກົດໝາຍ ຕາມຄວາມເໝາະສົມເພື່ອສົ່ງເສີມ ການສືບຂ່າວລັບ ທີ່ເລັງໃສ່ ການຕ້ານການຄ້າມະນຸດ, ພ້ອມກັບ ການເຄົາລົບ ຄວາມເປັນສ່ວນຕົວ ແລະ ຄວາມປອດໄພ ຂອງຜູ້ຖືກເຄາະຮ້າຍ ຜູ້ທີ່ມີສ່ວນຮ່ວມໃນການລະບຸໂຕ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ສ່ວນໃຫ່ຍມີຂໍ້ມູນ ສຳຄັນກ່ຽວກັບເສັ້ນທາງຂອງນາຍໜ້າ ແລະ ທາງຜ່ານ. ຖ້າການ ແບ່ງປັນຂໍ້ມູນມີອຸປະສັກຍ້ອນຊ່ອງວ່າງ ລະຫວ່າງ ຕຳຫຼວດ ແລະ ບັນດາ ອົງການ NGO ຕ້ອງແກ້ໄຂ. ໃນເວລາພົວພັນກັບອົງການຈັດຕັ້ງຕ່າງໆ ທີ່ມີອຳນາດຕຸລາການຊ້ຳຊ້ອນກັນ, ເປັນສິ່ງທີ່ສຳຄັນທີ່ສຸດ ທີ່ການສືບຂ່າວລັບ ຄວນເຊື່ອມເຂົ້າໃນອົງການຂອງເຂົາເຈົ້າຢ່າງແທດເໝາະ. ອົງການຈັດຕັ້ງທີ່ບັງຄັບໃຊ້ກົດໝາຍ ອາດມີຖານະດີກວ່າ ທີ່ຈະເປັນຜູ້ສືບສວນສອບສວນ ການລະເມີດສິດທິມະນຸດ ທີ່ພົວພັນກັບ ການຂູດຮີດແຮງງານ ແລະ ທາງເພດຖ້າເຂົາເຈົ້າມີພາລະບົດບາດ ໃນການປາບປາມອາດຊະຍາກຳ ທີ່ມີການຈັດຕັ້ງ ແລະ ການສໍ້ລາດບັງຫຼວງ.

**ຕຳຫຼວດທີ່ສືບຂ່າວລັບ ແລະປະຕິບັດງານໂດຍອີງໃສ່ການກະຕຸກຊຸກຍູ້.**

ການສືບສວນສອບສວນໃນເຊີງລຸກນຳໃຊ້ເຕັກນິກທີ່ຫຼາກຫຼາຍ... 

ໜ່ວຍງານວິຊາການຕຳຫຼວດໃນລະດັບຊາດ ແລະທ້ອງຖິ່ນ ຄວນໄດ້ຮັບການຝຶກອົບຮົມຫຼາຍຂຶ້ນໃນການສືບຂ່າວລັບ ກ່ຽວກັບເຄືອຂ່າຍການຄ້າມະນຸດ ແລະສະຖານທີ່ຂູດຮີດ. ໜ່ວຍງານນີ້ ໄດ້ຖືກສ້າງຂຶ້ນໃນບາງປະເທດ ເຊັ່ນ ອັງກິດ, ແຕ່ບໍ່ໄດ້ມີຄວາມຕ້ອງການຮີບດ່ວນໃນປະເທດອື່ນທີ່ເປັນປາຍທາງການຂູດຮີດ. ສິ່ງສຳຄັນຈຳເປັນທີ່ໜ່ວຍງານນີ້ ມີນະໂຍບາຍການໝູນວຽນທີ່ໝັ້ນຄົງ ແລະໄລຍະຍາວພໍສົມຄວນ, ພ້ອມດ້ວຍໂຄງຮ່າງການກະຕຸກຊຸກຍູ້ເພື່ອສົ່ງເສີມໃຫ້ມີການເຮັດວຽກຂອງຕຳຫຼວດໃນເຊີງລຸກ.

## *ການຕິດຕາມ ໂດຍພາກສ່ວນອື່ນທີ່ບໍ່ແມ່ນຕຳຫຼວດ*

ທັງການຄ້າທາງເພດ ແລະ ແຮງງານມະນຸດ, ບັນດາອົງການ NGO ແລະ ການເຝົ້າລະວັງຂອງຊຸມຊົນ ສ່ວນໃຫ່ຍໄດ້ຮັບການລາຍງານເປັນຜູ້ທຳອິດ ກ່ຽວກັບການຂູດຮີດ ແລະສະຖານທີ່ຂູດຮີດ, ສ່ວນໃຫ່ຍແມ່ນປະຫວັດລະອຽດ ຂອງນາຍໜ້າ ແລະ ຜູ້ຂູດຮີດ. ໃນຖານະເປັນຊ່ອງທາງທີ່ເປັນທາງເລືອກ ສຳລັບຄະດີຂູດຮີດທີ່ໄດ້ຮັບການແຈ້ງ ແລະຖືກສືບສວນສອບສວນ, ຂໍ້ມູນທີ່ເກັບກຳໂດຍຜູ້ຕິດຕາມໃນຊຸມຊົນ ແລະແຫຼ່ງຂອງເຂົາເຈົ້າ ສາມາດສະໜອງຂໍ້ມູນຂ່າວສານທີ່ມີຄ່າ ສຳລັບການບັງຄັບໃຊ້ກົດໝາຍ, ດີທີ່ສຸດ

ຕ້ອງສະໜອງໃຫ້ມີລະບົບການສືບຂ່າວ ທີ່ຄົບຖ້ວນສົມບູນ. ບາງອົງການ NGO ຍັງອາດສາມາດມີບົດບາດ ໃນການສ້າງຂີດຄວາມສາມາດ ສໍາລັບຕໍາຫຼວດ, ພ້ອມກັບ ຊ່ວຍເຫຼືອການສືບສວນສອບສວນ ແລະ ໂຄສະນາ ແລະປູກຈິດສໍານຶກ. ໃນຂະນະທີ່ສິ່ງນີ້ ບໍ່ແມ່ນສິ່ງທີ່ດີສຸດ, ໃນບາງປະເທດ ສ່ວນຫຼາຍສິ່ງເຫຼົ່ານີ້ແມ່ນ ບາດກ້າວທີ່ສໍາຄັນໜຶ່ງ ໃນຂົງເຂດການຂູດຮີດ ກ່ອນທີ່ຂີດຄວາມສາມາດ, ຄວາມໝັ້ນໃຈ ແລະ ຄວາມມຸ້ງໝັ້ນທາງການເມືອງ ຂອງການບັງຄັບປະຕິບັດກົດໝາຍ ຈະຢູ່ໃນລະດັບທີ່ພຽງພໍ. ເຖິງແນວໃດກໍ່ຕາມ, ສາມາດເຮັດໄດ້ ໂດຍຜ່ານການເປັນພັນທະມິດກັບອົງການຈັດຕັ້ງທີ່ບັງຄັບໃຊ້ກົດໝາຍ ແລະ/ຫຼື ແຮງງານ ທີ່ບັນດາອົງການ NGO ສາມາດຂໍຄວາມຊ່ວຍເຫຼືອໄດ້ຢ່າງຫຼາຍໃນການ ດໍາເນີນການຕ້ານການຂູດຮີດ.

ສໍາລັບການຄ້າ ແລະຂູດຮີດແຮງງານ, ອົງການຫຼັກ ສໍາລັບກວດກາບ່ອນເຮັດວຽກ (ທໍາມະດາແມ່ນ ກົມແຮງງານໃນກະຊວງແຮງງານ) ຄວນປ້ອງກັນບໍ່ໃຫ້ບ່ອນເຮັດວຽກທາງການ ລະເມີດກົດໝາຍແຮງງານ ແລະ ນໍາໃຊ້ແຮງງານ ທີ່ຖືກບັງຄັບ. ການຕິດຕາມບ່ອນເຮັດວຽກທີ່ລະອຽດ ໂດຍກົມແຮງງານ ສາມາດເປັນເຄື່ອງກວດກາ ແລະກົນໄກບັງຄັບປະຕິບັດທີ່ມີປະສິດທິຜົນ ໃນການປ້ອງກັນການຂູດຮີດ. ເຖິງແນວໃດກໍ່ຕາມ, ສ່ວນໃຫ່ຍເປັນກໍລະນີ ທີ່ເຂົາເຈົ້າບໍ່ມີປະສິດທິຜົນ ແລະ ຍ້ອນບໍ່ມີອໍານາດ ລັງເລທີ່ຈະມີບົດບາດທີ່ຫ້າວຫັນ. ໃນຖານະເປັນຕົວແບບທີ່ທັນສະໄໝກວ່າ ທີມງານກວດກາແຮງງານເຄື່ອນທີ່ ຢູ່ ປະເທດບູາຊິນ ໄດ້ຮັບການສຶກສາໃນຖານະເປັນທາງເລືອກໜຶ່ງ ໃນການປ້ອງກັນ ແລະລົງໂທດການຂູດຮີດແຮງງານ. ການຕິດຕາມແຮງງານມີຜົນດີ ຍ້ອນບໍ່ຕ້ອງການໃບອະນຸຍາດກວດຄົ້ນ ແລະສ່ວນໃຫ່ຍນໍາໄປສູ່ການເປີດເຜີຍສະຖານທີ່ຂູດຮີດ, ຫຼື ພື້ນຖານອື່ນ ນອກຈາກການຄ້າມະນຸດ.

> ***ໃນບ່ອນທີ່ການກວດກາແຮງງານມີປະສິດທິຜົນ, ສ່ວນໃຫ່ຍແມ່ນຍ້ອນ:***
>
> - ມີສາຍພົວພັນຈະແຈ້ງ ກັບອົງການບັງຄັບປະຕິບັດກົດໝາຍທີ່ແຂງແຮງ, ຫຼື
> - ໜ່ວຍງານກວດກາແຮງງານມີການຝຶກອົບຮົມດີ ທັງໜ່ວຍງານສູນກາງ ຫຼື ເຄື່ອນທີ່, ໂດຍບໍ່ມີສາຍພົວພັນຊໍ້ລາດບັງຫຼວງກັບທຸລະກິດ.

## *ການສ້າງຂີດຄວາມສາມາດຍຸດຕິທໍາອາດຍາ ແລະແຮງງານ*

ໃນອາຊີຕາເວັນອອກສ່ຽງໃຕ້, ການສ້າງຂີດຄວາມສາມາດ ສໍາລັບຜູ້ບັງຄັບປະຕິບັດກົດໝາຍ ແລະເຈົ້າໜ້າທີ່ແຮງງານ ຍັງຂາດຊັບພະຍາກອນ ແລະບາງຄັ້ງບໍ່ມີແມ້ກະທັ້ງການຝຶກອົບຮົມພື້ນຖານ. ບາງໜ່ວຍງານຕໍາຫຼວດວິຊາສະເພາະໄດ້ຮັບການຝຶກອົບຮົມສະເພາະໃນການສືບສວນສອບສວນຄະດີອາຍາ, ແລະບໍ່ຈໍາເປັນຕ້ອງມີເຕັກໂນໂລຊີ ທີ່ທັນສະໄໝ. ເຖິງແນວໃດກໍ່ດີ, ມີການອອກວຽກຫຼາຍຕໍາຫຼວດທີ່ມີສ່ວນຮ່ວມກັບວຽກງານຄ້າມະນຸດ ເຊິ່ງນໍາໄປສູ່ການຍົກຍ້າຍ ແລະເລື່ອນຂັ້ນປະຈໍາ ຂອງຜູ້ທີ່ມີວິຊາສະເພາະ ແລະເປັນການກີດຂວາງຜົນກະທົບທີ່ຍືນຍົງ.

ອີກສິ່ງທ້າທາຍອັນໜຶ່ງແມ່ນການຂາດການກະຕຸກຊຸກຍູ້ ທີ່ແທ້ຈິງສໍາລັບຕໍາຫຼວດໃຫ້ຕອບໂຕ້ຢ່າງມີປະສິດທິຜົນ ຕໍ່ການຄ້າມະນຸດ. ນອກຈາກນັ້ນ, ຕໍາຫຼວດບາງຄົນຍັງສໍ້ລາດບັງຫຼວງອາໃສເງິນສິນບົນຂອງທຸລະກິດ ເປັນສ່ວນໜຶ່ງ ຂອງລາຍໄດ້, ແລະບາງຄັ້ງສ້າງສາຍພົວພັນແບບໃຫ້ການປົກປ້ອງກັບ ຜູ້ຄ້າມະນຸດ. ເມື່ອສົມທຽບກັບອົງການຕໍາຫຼວດວິຊາການອື່ນ ເຊັ່ນຕໍາຫຼວດປາດປາມຢາເສບຕິດ ທີ່ຖືວ່າຊື່ສັດກວ່າ ຍ້ອນການຍ້ອງຍໍ ແລະຖານະທີ່ໄດ້ຮັບຈາກຄວາມສໍາເລັດ, ບາງຄັ້ງມີການອອກຂ່າວການ ລົງໂທດຜູ້ກະທໍາຜິດ ທີ່ຖືວ່າເປັນຜູ້ຮ້າຍສໍາຄັນ. **ຜົນໄດ້ຮັບທີ່ຕໍ່າຫຼາຍໃນການເຮັດວຽກຕໍາຫຼວດຕ້ານການຄ້າມະນຸດ ແລະການຂາດຄວາມໂປ່ງໃສທີ່ກວດສອບໄດ້ໃນການຕ້ານການສໍ້ລາດບັງຫຼວງອາດ ເຮັດໃຫ້ຍຸ້ງຍາກໃນການລົງໂທດຜູ້ກະທໍາຜິດການຄ້າມະນຸດໄດ້ຢ່າງສໍາເລັດຜົນ.**

ການກະກຽມໃນການຊ່ວຍເຫຼືອເປັນກຸນແຈສຳຄັນຕໍ່ຄວາມສຳເລັດ ແລະຄວນອີງໃສ່ຄູ່ມື ແລະ ແຜນການປະຕິບັດງານເປັນຕົ້ນຕໍ ຊຶ່ງໄດ້ມີການລະບຸບົດບາດ ແລະຄວາມຮັບຜິດຊອບທີ່ຈະແຈ້ງ ຂອງແຕ່ລະຄົນ ແລະ ທີມ, ພ້ອມທັງ ການປະສານງານທີ່ແຂງແຮງໃນສະຖານທີ່ ລະຫວ່າງທີມຕຳຫຼວດ, ໄອຍາການ, ຜູ້ແປພາສາ ແລະຜູ້ໃຫ້ບໍລິການແກ່ຜູ້ຖືກເຄາະຮ້າຍ. ການລົງເຮັດວຽກບໍ່ແມ່ນຈະເລີ່ມ ດ້ວຍຈຸດປະສົງໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍເທົ່ານັ້ນ ແຕ່ຕ້ອງເກັບກຳຫຼັກຖານພຽງພໍໃນການລົງໂທດນາຍໜ້າ, ຜູ້ຄ້າ ແລະ ຜູ້ຂູດຮີດ. ຄວາມສ່ຽງຕໍ່ຊີວິດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ຈະເກີດຂຶ້ນ ຮຽກຮ້ອງ ຈະແຈ້ງໃຫ້ມີການຕອບໂຕ້ຢ່າງຮີບດ່ວນ. ແຕ່ຖ້າເຮັດໄດ້ ແລະເວລາເໝາະສົມເທົ່ານັ້ນ, **ຕ້ອງໄດ້ມີການເກັບຂ່າວລັບ ກ່ອນການບຸກເຂົ້າ, ຊຶ່ງຜົນສຳເລັດກໍ່ຈະຫຼາຍກວ່າ.** ການສືບຂ່າວກ່ອນ ແລະເກັບຫຼັກຖານ ເທົ່າທີ່ມີກ່ອນ ຈະມີຜົນກະທົບຍຸດທະສາດທີ່ໃຫ້ມີການຮັບຜິດ ແລະຮ່ວມມືຂອງຜູ້ຄ້າ ແລະຜູ້ຂູດຮີດແຕ່ຕົ້ນ, ໃນເວລາທີ່ ເຂົາເຈົ້າ ຮັບຮູ້ເຖິງນ້ຳໜັກຂອງຫຼັກຖານທີ່ສາມາດດຳເນີນຄະດີກັບເຂົາເຈົ້າໄດ້.

**ພຽງແຕ່ບຸກຄົນສຳຄັນເທົ່ານັ້ນ ທີ່ຄວນມີໜ້າໃນການບຸກເຂົ້າ /ຊ່ວຍເຫຼືອ.** ສະຖານທີ່ເກີດເຫດຄວນບໍ່ໃຫ້ມີຄົນອື່ນ ທີ່ບໍ່ມີພາລະບົດບາດບັງຄັບໃຊ້ກົດໝາຍໂດຍກົງ. ຜູ້ອື່ນ ເຊັ່ນ: ນັກຂ່າວ, ອົງການNGO, ຕຳຫຼວດ ໗ ມ, ແລະຜູ້ສັງເກດການອື່ນ ອາດມີຄວາມສ່ຽງໃນການເປີດເຜີຍ ຄວາມລັບຂອງການ ດຳເນີນງານ, ເຮັດໃຫ້ຜູ້ຖືກເຄາະຮ້າຍສັບສົນ, ພາລະບົດບາດໜ້າທີ່ມີຄວາມສັບສົນ ແລະເຮັດໃຫ້ຫຼັກຖານເສຍຫາຍ.

ເນື່ອງຈາກວ່າ **ຕ້ອງໄດ້ມີການເຄື່ອນຍ້າຍຜູ້ຖືກເຄາະຮ້າຍເພື່ອການສຳພາດຂັ້ນຕົ້ນ ແລະເອົາອອກໄປຍັງບ່ອນປອດໄພຈາກສະຖານທີ່ເກີດເຫດ/ບ່ອນຂູດຮີດ**, ການວາງແຜນກ່ອນການບຸກແມ່ນສຳຄັນທີ່ສຸດ ສຳລັບການປະສານງານຂອງທີມ ທີ່ຄວບຄຸມສະຖານທີ່ເກີດເຫດ; ເກັບກຳ ແລະບັນທຶກຫຼັກຖານ; ຈັບກຸມ ແລະເຄື່ອນຍ້າຍຜູ້ຖືກສົງໃສ; ພ້ອມທັງຍົກຍ້າຍ, ກວດກາ ແລະປະຕິບັດຢ່າງເໝາະສົມກັບຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ. ຜູ້ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະເຈົ້າໜ້າທີ່ສັງຄົມສົງເຄາະທີ່ ຈະມີສ່ວນຮ່ວມໃນການເບິ່ງແຍງຫຼັງການຊ່ວຍເຫຼືອ ບໍ່ຈຳເປັນຕ້ອງຮູ້ລາຍລະອຽດເຕັມທີ່ ຂອງການບຸກ/ ຊ່ວຍເຫຼືອ (ສະຖານທີ່, ທຸລະກິດ, ເປົ້າໝາຍ) ທີ່ຈຳເປັນໃນການກະກຽມ ເອົາອອກມາໄວເທົ່າທີ່ຈະໄວ້ໄດ້ຈາກການ ຖືກຂູດຮີດ, ເຂົ້າໄປໃນສະຖານທີ່ດ້ວຍກຳລັງຖ້າຈຳເປັນ ເພື່ອຮັບປະກັນຄວາມປອດໄພ ຂອງຜູ້ຖືກເຄາະຮ້າຍ, ເຖິງແນວໃດກໍ່ຕາມ, ປະສົບການໄດ້ສະແດງໃຫ້ເຫັນຜົນຮັບຂອງການດຳເນີນການດັ່ງກ່າວ ມີທັງຜົນບວກ ແລະ ລົບ ສຳລັບຜູ້ທີ່ຖືກລະບຸໂຕວ່າແມ່ນຜູ້ຖືກເຄາະຮ້າຍ ແລະບໍ່ແມ່ນຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ. ຖ້າຕ້ອງໄດ້ປະຕິບັດຕ້ອງມີການວາງແຜນຢ່າງຮອບຄອບວ່າການປະຕິບັດງານຈະເປັນ ໄປແນວໃດ.

## 2. 3 ຈຸດປະສົງ ຂອງການບຸກເຂົ້າສະຖານທີ່ຄ້າມະນຸດ/ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

*ຍາມໃດທີ່ 3 ຈຸດປະສົງນີ້ ຖືກຕອບສະໜອງບໍ່ຄົບ, ການນຳໃຊ້ການບຸກເຂົ້າຈະຖືກຕັ້ງຄຳຖາມວ່າຈຳເປັນບໍ່. ສິ່ງທີ່ຄວນເອົາໃຈໃສ່: ການຊອກຫາ ແລະຈັບກຸມຜູ້ເຂົ້າເມືອງມາອອກແຮງງານຜິດກົດເມືອງ ໃນບັນດາຜູ້ທີ່ອາດຖືກຄ້າມະນຸດ ບໍ່ຄວນຖືເປັນຈຸດປະສົງ ຕົ້ນຕໍ ຂອງ ການບຸກ/ການຊ່ວຍເຫຼືອ.*

**ຈຸດປະສົງ ທີ1: ເພື່ອ <u>ຈັບກຸມ</u> ຜູ້ຖືກຫາວ່າກະທຳຜິດທີ່ພົວພັນກັບການຄ້າມະນຸດ.**

- ເປົ້າໝາຍຕົ້ນຕໍແມ່ນຜູ້ຖືກສົງໃສວ່າຈະຄ້າມະນຸດ, ບັງຄັບໃຫ້ຜູ້ອື່ນເຮັດວຽກ, ທາລຸນ, ຂົ່ມຂືນ, ລັກພາຕົວ ຫຼືການໃຊ້ຄວາມຮຸນແຮງອື່ນ. ເປົ້າໝາຍອາດເປັນຜູ້ຈ້າງງານ, ພະນັກງານຍາມ, ນາຍໜ້າ, ຜູ້ຄຸ້ມງານ ຫຼື ພວກແມງດາ.
- ພາຍຫຼັງທີ່ໄດ້ມີການຄວບຄຸມ, ຜູ້ຖືກຫາຄວນຖືກແຍກອອກຈາກຜູ້ທີ່ອາດເປັນຜູ້ຖືກເຄາະຮ້າຍ ຫຼື ພະຍານ ອື່ນ ໂດຍທັນທີ.

**ຈຸດປະສົງ ທີ 2: ເພື່ອ <u>ຍຶດເອົາຫຼັກຖານ</u> ຂອງການກະທຳຜິດ.**

- ຕ້ອງຖືວ່າສະຖານທີ່ ເປັນສະຖານທີ່ເກີດເຫດ ແລະອາດເຕັມໄປດ້ວຍຫຼັກຖານທີ່ແຈກຢາຍກັນຢູ່, ລວມທັງ ກ້ອງວົງຈອນປິດ, ອາວຸດ, ໃບຮັບເງິນ ຈາກການເຮັດທຸລະກຳການເງິນ ແລະຫຼັກຖານ ໃນການທາລຸນ ແລະກັກຂັງຕົວ. ການເກັບກຳ ຫຼັກຖານໃນການບຸກ ສ່ວນຫຼາຍໝັກຈະຖືກເສຍຫາຍ ຍ້ອນສາຍເຫດທີ່ວ່າ ວັດຖຸຫຼັກຖານສຳຄັນຖືກ ມອງຂ້າມວ່າບໍ່ກ່ຽວຂ້ອງ. ພຽງແຕ່ຜູ້ທີ່ມີວິຊາສະເພາະເທົ່ານັ້ນ ທີ່ຕ້ອງເກັບກຳ ແລະບັນທຶກຫຼັກຖານ ແລະອະນຸຍາດໃຫ້ເກັບກຳຫຼັກຖານໃນ ສະຖານທີ່ເກີດເຫດ.
- ກ່ອນການບຸກ, ການເຝົ້າຕິດຕາມ ແລະສືບຂ່າວລັບອື່ນຄວນມີ ລວມທັງ ການກວດປະຫ້ວດ ແລະເກັບລາຍການໂທລະສັບ ແລະບັນທຶກທາງການເງິນ ຂອງຜູ້ຖືກຫາ ທີ່ສາມາດວິໃຈ ເພື່ອຄາດຄະເນວ່າ ຕ້ອງໄດ້ຍຶດເອົາຫຼັກຖານໃດແດ່ໃນສະ ຖານທີ່ເກີດເຫດ.
- ໃນບາງປະເທດ, ໄອຍາການສາມາດມີໜ້າເພື່ອສະໜັບສະໜູນການເກັບກຳຫຼັກຖານໃນສະຖານທີ່ເກີດເຫດ. ສິ່ງ ນີ້ບໍ່ພຽງ ແຕ່ເປັນການຮັບປະກັນວ່າ ທຸກຫຼັກຖານທີ່ສຳຄັນຈະຖືກເກັບກຳເພື່ອໃຫ້ຄະດີມີຫຼັກຖານແຂງແຮງເທົ່ານັ້ນ, ແຕ່ມັນຍັງຈະໃຫ້ໄອຍາການມີສ່ວນຮ່ວມໃຈກາງໃນຄະດີແຕ່ເບື້ອງຕົ້ນ.

**ຈຸດປະສົງ ທີ 3: ເພື່ອ <u>ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ</u> ຂອງການຄ້າມະນຸດ ແລະຂູດຮີດ.**

- ການຊ່ວຍເຫຼືອຄວນຖືກປະຕິບັດສະເໝີ ຖ້າຜູ້ຖືກເຄາະຮ້າຍອາດຕົກຢູ່ໃນອັນຕະລາຍ ແລະຄວາມເສຍຫາຍຮ້າຍແຮງ ແລະເປັນປະຈຳ. ການດຳເນີນງານອື່ນອາດເໝາະສົມ ຖ້າຜູ້ຖືກເຄາະຮ້າຍບໍ່ຢູ່ໃນຄວາມສ່ຽງຮ້າຍແຮງ. ສ່ວນໃຫ່ຍ, ການຊ່ວຍເຫຼືອ ສາມາດມີຜົນຕາມມາດ້ານລົບ ສຳລັບຜູ້ທີ່ຖືກຍົກຍ້າຍຈາກສະຖານທີ່ເຮັດວຽກ ບໍ່ວ່າຈະມີການ ລະບຸຕົວ ຢ່າງຈະແຈ້ງຜູ້ຄ້າມະນຸດຫຼືບໍ່ກໍ່ຕາມ. ຄວນມີການນຳໃຊ້ການປະເມີນຄວາມສ່ຽງ ເພື່ອກຳນົດຄວາມ ສ່ຽງໂດຍລວມ.
- ການຊ່ວຍເຫຼືອ ສາມາດເຮັດໃຫ້ມີຄວາມຢ້ານກວາຫຼວງຫຼາຍ ແລະຄວາມວິຕົກ ສຳລັບຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍ ຄວນໄດ້ຮັບການເຄື່ອນຍ້າຍທັນທີ ອອກຈາກສະຖານທີ່ເກີດເຫດ ແລະຈາກສະພາບແວດລ້ອມອັນຕະລາຍ ເພື່ອຫຼຸດ ຜ່ອນຄວາມຢ້ານກວາ, ກັງວົນ, ສັບສົນ ແລະການນາມຂູ່ຈາກພວກອາສະຍາກອນ.
- ຕອ້ງໄດ້ມີການນຳສະເໜີທັນທີ ຂໍ້ມູນຂ່າວສານ ແລະທາງເລືອກ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຍ້ອນຄວາມຕ້ອງການ ແລະຄວາມກັງວົນສ່ວນຕົວແຕກຕ່າງກັນ ຂຶ້ນກັບສະພາບ, ລັກສະນະສະເພາະ, ປະສົມການ ແລະລະດັບຂອງຜົນຮ້າຍທີ່ໄດ້ຮັບ ຂອງໃຜມັນ.
- ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມີສິດເລືອກວ່າ ການບໍລິການໃດທີ່ເຂົາເຈົ້າຕ້ອງການຮັບ ແລະອັນໃດບໍ່ຕ້ອງການ ຊຶ່ງຈະບໍ່ມີການບັງຄັບໃຫ້ເຂົາເຈົ້າຮັບການບໍລິການໃດ (ແຕ່ເດັກນ້ອຍມີຄວາມຕ້ອງການໃນການປົກປອ້ງພິເສດ). ຜູ້ທີ່ເຄີຍຕົກໃນສະພາບເປັນທາດ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນໄດ້ຮັບການຊ່ວຍເຫຼືອໃນການໃຫ້ມີສິດໃນການເລືອກທາງເລືອກເຕັມທີ່, ອົງການທີ່ຊ່ວຍເຫຼືອ ແລະໄດ້ຮັບການຄວບຄຸມຊີວິດຂອງເຂົາເຈົ້າອີກຄັ້ງ.

## *3. ການຕອບໂຕ້ ແລະການຕັດສິນບັນຫາຫຼັງການບຸກເຂົ້າ*

## *ການບຸກ/ຊ່ວຍເຫຼືອຄວນຕິດຕາມດ້ວຍການຕິດຕາມຜົນຢ່າງຮອບດ້ານ ໃນສອງແງ່: ລະບົບຍຸຕິທຳທາງອາຍາ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ*

### *ການຕອບໂຕ້ດ້ວຍລະບົບຍຸຕິທຳທາງອາຍາ*

ການຕ້ານການຄ້າມະນຸດໂດຍຊຸມຊົນ ຄວນມີຄວາມດຸ່ນດ່ຽງ ລະຫວ່າງແບບວິທີເອົາໃຈໃສ່ຜູ້ຖືກເຄາະຮ້າຍເປັນຫຼັກ ແລະການຕອບໂຕ້ທາງຍຸດຕິທຳອາຍາ. ຈຸດສຸມຄວນແມ່ນການຊ່ວຍເຫຼືອບຸກຄົນອອກຈາກສະພາບການຖືກຂູດຮີດຫຼາຍກວ່າ. ໃນຂະນະທີ່ມັນສຳຄັນ, ແບບວິທີເອົາໃຈໃສ່ຜູ້ຖືກເຄາະຮ້າຍເປັນຫຼັກນີ້ ຄວນສຸມໃສ່ການເຊື່ອມສານເອົາຄວາມເຂົ້າໃຈທີ່ກວ້າງຂວາງກວ່າ ກ່ຽວກັບໜ້າທີ່ຂອງຍຸດຕິທຳທາງອາຍາ ວ່າເປັນໄລຍະຍາວ ແລະການກວດກາໃນວົງກວ້າງ, ຊຶ່ງຜູ້ຄ້າມະນຸດ ຕ້ອງຖືກລົງໂທດ. ການສ້າງຄວາມເຂັ້ມແຂງ **ການຕອບໂຕ້ດ້ວຍລະບົບຍຸດຕິທຳທາງອາຍາເຊີງລຸກ ຍັງອາດມີຜົນກະທົບທາງບວກໃນການ ໃຫ້ມີພາລະແບກຫາບໜ້ອຍກວ່າ ສຳລັບຜູ້ຖືກເຄາະຮ້າຍ.** ມັນອາດມີ ການສຸມໃສ່ການລະບຸໂຕນາຍໜ້າ ແລະຜູ້ຄ້າ ເຊັ່ນດຽວກັນກັບການລະບຸໂຕຜູ້ຖືກເຄາະຮ້າຍ ແລະອື່ນໆ; ສຸມໃສ່ເສັ້ນທາງທີ່ເປັນທາງເລືອກຕ່າງໆຂອງເຄືອຂ່າຍອາດຊະຍາກຳ ເຊັ່ນການເສຍອາກອນ ແລະ ຈັບກຸມການຟອກເງິນ; ແລະສຸມໃສ່ການໃຫ້ທຶນແບບຮອບດ້ານ ແລະການຊ່ວຍເຫຼືອດ້ານວິຊາການ ແກ່ເຈົ້າໜ້າທີ່ບັງຄັບປະຕິບັດກົດໝາຍ.

ໃນບາງກໍລະນີໃນອາຊີຕາເວັນອອກສ່ຽງໃຕ້, ອາດມີມາດຕະການລົງໂທດສະຖານຂູດຮີດ – ໂຮງງານ, ບ່ອນຂາຍບໍລິການ, ຮ້ານຄາລາໂອເກະ ຫຼື ຟາມ – ຊຶ່ງຈະສາມາດລົງໂທດອາດສະຍາກອນ ແລະ ຢຸດຕິການຂູດຮີດ. ໃນບາງກໍລະນີ, ນາຍໜ້າທີ່ເອົາຜູ້ຖືກເຄາະຮ້າຍໄປຍັງສະຖານທີ່ ໃດໜຶ່ງອາດເຊື່ອມໂຍງກັບສະຖານທີ່ຂູດຮີດອື່ນ ແລະເຂົາເຈົ້າອາດເປັນຜູ້ຂູດຮີດຫຼັກ ແລະໄດ້ຮັບກຳໄລຕົ້ນຕໍ, ຈາກການຄວບຄຸມ ແລະເກັບກ່ຽວກຳໄລ ຍ້ອນຜູ້ຖືກເຄາະຮ້າຍຕິດໜີ້ເຂົາເຈົ້າ. ໃນກໍລະນີນີ້, ການບຸກສະຖານທີ່ ເຮັດວຽກໜຶ່ງ ໂດຍບໍ່ມີການສືບສວນສອບສວນດີ ສາຍພົວພັນຂອງນາຍໜ້າ ອາດມີຜົນກະທົບໜ້ອຍ ຕໍ່ສະພາບການຄ້າມະນຸດລວມ.

### *ການບໍລິການ, ການຊົດເຊີຍ ແລະຄວາມຍຸດຕິທຳ ສຳລັບຜູ້ຖືກເຄາະຮ້າຍ*

ຫົວໃຈຂອງທຸກການບຸກເຂົ້າສະຖານທີ່ ແມ່ນຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ເຖິງແນວໃດກໍ່ຕາມ, ຄວາມດຸ່ນດ່ຽງ ຂອງ 'ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ' ສາມາດເປັນສິ່ງຕັດສິນອານາຄົດຂອງຜູ້ກ່ຽວ – ບາງຄັ້ງເປັນທາງບວກ, ບາງຄັ້ງເປັນທາງລົບ ແລະ ອາດເປັນສິ່ງທີ່ບໍ່ປາດຖະໜາຂອງຜູ້ທີ່ຖືກຂູດຮີດ. **ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຄວນໄດ້ຮັບສິດເລືອກການບໍລິການທີ່ຕົນຈະຮັບ ແລະທີ່ຈະປະຕິເສດ.** ຜູ້ທີ່ເຄີຍຕົກ ໃນສະພາບເປັນທາດ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນໄດ້ຮັບການຊ່ວຍເຫຼືອໃນການ ໃຫ້ມີສິດໃນການເລືອກທາງເລືອກເຕັມທີ່ ໃນການເລີ່ມຕົ້ນຊີວິດໃໝ່ຂອງເຂົາເຈົ້າເອງ ອີກຄັ້ງໜຶ່ງຕັ້ງແຕ່ ຕົ້ນ. ແຕ່ວ່າໃນຂະນະດຽວກັນ ເດັກນ້ອຍຕ້ອງໄດ້ຮັບການປົກປ້ອງພິເສດ, ບໍ່ວ່າ ເຂົາເຈົ້າຈະໃຫ້ການ ຮ່ວມມືໃນການດຳເນີນຄະດີຫຼືບໍ່ກໍ່ຕາມ, ຜູ້ຖືກເຄາະຮ້າຍທຸກຄົນມີສິດທີ່ຈະເລືອກ ຢ່າງອິດສະຫຼະ ທີ່ຈະ ຮັບ ຫຼື ປະຕິບັດການບໍລິການ; ການໄດ້ຮັບການຊົດເຊີຍ; ຄວາມຍຸຕິທຳ ໃນການຮ້ອງຟ້ອງ ຜູ້ກະທຳຜິດ ໃນການທາລຸນເຂົາເຈົ້າ. ໃນການໄດ້ຮັບການຊົດເຊີຍ ແມ່ນນຳໃຊ້ຜົນກຳໄລທີ່ຜູ້ກະທຳຜິດ ໄດ້ຈາກການຂູດຮີດ




ເຂົາເຈົ້າ, ລວມທັງ ເງິນທີ່ຍຶດໄດ້ ແລະຊັບສິນທີ່ຖືກຍຶດ (ຕາມກົດໝາຍ), ສະໜອງ ການຊົດເຊີຍແກ່ຜູ້ຖືກເຄາະຮ້າຍຢ່າງໄວວາ ໃນຂະນະທີ່ໃຫ້ເຂົາເຈົ້າຮູ້ຢ່າງຈະແຈ້ງວ່າກົດໝາຍຖືບັນຫາການຄ້າມະນຸດເປັນຄະດີຮ້າຍແຮງ, ແລະຈະໃຊ້ການໂຈມຕີທາງການເງິນເພື່ອຢຸດຕິທຸລະກິດຢ່າງຈິງຈັງ.

ບາງຄັ້ງ ຜູ້ຖືກເຄາະຮ້າຍ ໃນອາຊີຕາເວັນອອກສ່ຽງໃຕ້ ຖືກບັງຄັບໃຫ້ຢູ່ໃນສູນຟື້ນຟູ ແລະຕ້ອງເປັນພະຍານໃນສານ. ມັນຊັດເຈນວ່າ ສິ່ງດັ່ງກ່າວ ເປັນການລະເມີດສິດທິ ຂອງຜູ້ຖືກເຄາະຮ້າຍ, ໃນການບັງຄັບເຂົາເຈົ້າໃຫ້ຢູ່ ໃນສູນເປັນຫຼາຍເດືອນ ຫຼື ຫຼາຍປີ ເພື່ອລໍຖ້າຂະບວນການທາງອາຍາ ຈົນກວ່າຈະຈົບລົງ, ແລະ ອາດເຮັດໃຫ້ມີຄວາມສ່ຽງໃນການແກ້ແຄ້ນ ຂອງເຄືອຂ່າຍອາສະຍາກອນຢູ່ພາຍໃນປະເທດ. ມັນຍັງ ອາດເຮັດໃຫ້ເຂົາເຈົ້າຢ້ານກົວທີ່ຈະຂຶ້ນສານເພື່ອເປັນພະຍານ. ຜູ້ຖືກເຄາະຮ້າຍຫຼາຍຄົນບຢາກຖືກໄຈ້ແຍກວ່າເປັນ 'ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ' ຍ້ອນຂະບວນການທີ່ມີຄວາມເຈັບປວດ ເຊິ່ງບາງຄັ້ງຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດຖືກບັງຄັບໃຫ້ທົນຢູ່ກັບມັນ. ສະນັ້ນ, **ຕ້ອງມີການໃຫ້ສິ່ງກະຕຸກ ຊຸກຍູ້ແກ່ຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ** ເພື່ອປະກອບສ່ວນໃນຂະບວນການດຳເນີນຄະດີ ຕາມກົດໝາຍ, ຢ່າງໜ້ອຍໃຫ້ເຂົາເຈົ້າ ໄດ້ຮັບໃບອະນຸຍາດເຮັດວຽກຊົ່ວຄາວ (ຕາມຕົວແບບໃນເອີຣົບ); ການປົກປ້ອງພະຍານພື້ນຖານ; ມາດຕະການຊ່ວຍເຫຼືອຕ່າງໆໃນເວລາເຂົາເຈົ້າສະໜອງຫຼັກຖານ ແລະ ທາງເລືອກທີ່ບໍ່ຕ້ອງ 'ຖືກກັກຂັງ' ໃນ ສູນພັກຟື້ນ, ໃຫ້ເຂົາເຈົ້າມີອິດສະຫຼະໃນການເດີນທາງ, ເຮັດວຽກ ແລະຢູ່ຄືບໜ້າຄືບຕາກັບຄອບຄົວ.

## *ການໂຄສະນາເພື່ອເພີ່ມຄວາມມຸ້ງໝັ້ນທາງການເມືອງ ແລະການປະຕິບັດຕົວຈິງ*

ການຕັດສິນໃຈວ່າຈະບຸກ ຫຼື ຊ່ວຍເຫຼືອ ຄວນສົ່ງຜົນໃຫ້ມີການລົງໂທດຜູ້ກະທຳຜິດ ແລະການບໍລິການ ແລະ ຍຸຕິທຳ ຕໍ່ຜູ້ທີ່ຖືກຂູດຮີດ. ດຽວນີ້ ພວກເຮົາຢູ່ຂັ້ນຕອນໃດ? ການລົງໂທດຜູ້ກະທຳຜິດ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍຍັງບໍ່ເຂັ້ມແຂງ ໃນເກືອບທຸກປະເທດໃນພາກພື້ນນີ້. ການດຳເນີນຄະດີ ແລະການປົກປ້ອງຜູ້ຖືກເຄາະຮ້າຍແມ່ນມີສ່ວນກ່ຽວຂ້ອງກັນ; ຖ້າການປົກປ້ອງຜູ້ຖືກເຄາະຮ້າຍມີຈຸດອ່ອນ, ຈະບໍ່ມີແຮງຈູງໃຈຫຼາຍໃຫ້ຜູ້ຖືກເຄາະຮ້າຍ ໃຫ້ການຮ່ວມມືໃນຄະດີ. ຖ້າການດຳເນີນຄະດີບໍ່ເຂັ້ມແຂງ, ຄວາມຍຸຕິທຳ ແລະ ຄວາມປອດໄພສຳລັບຜູ້ຖືກເຄາະຮ້າຍກໍ່ຈະບໍ່ມີຜົນສຳເລັດ. ມີແຜນງານປົກປ້ອງເລັກໜ້ອຍ (ບາງຄົນວ່າບໍ່ມີເລີຍ) ສຳລັບຜູ້ຖືກເຄາະຈາກການຄ້າມະນຸດໃນພາກພື້ນ. **ການໂຄສະນາ ແລະ ການອອກຂ່າວຂອງສື່ໃນແງ່ບວກ ກ່ຽວກັບ ການຕໍ່ຕ້ານການຄ້າມະນຸດທີ່ປະສົບຜົນສຳເລັດ ອາດເຮັດໃຫ້ ມີການກະຕຸກຊຸກຍູ້ທາງບວກ** ເພື່ອເພີ່ມຄວາມ ມຸ້ງໝັ້ນທາງການເມືອງ, ຄວາມໂປ່ງໃສ ແລະການຕິດ ຕາມການຕ້ານການຄ້າມະນຸດໃນປະເທດ ຂອງລັດຖະບານ ແລະສາມາດເພີ່ມ ແລະຂະຫຍາຍໃຫ້ມວນຊົນກົດດັນໃຫ້ການຕ້ານການຄ້າມະນຸດ ມີການລາຍງານເພີ່ມຂຶ້ນກ່ຽວກັບກໍລະນີການຄ້າມະນຸດ.

## ສະຫຼຸບ

ສິ່ງໄດ້ຮັບຜົນດີ ຂອງການທັນປ່ຽນຈາກການຕອບໂຕ້ການຄ້າມະນຸດໃນເຊີງຮັບ ເປັນເຊີງລຸກ, ການຕອບໂຕ້ການຄ້າມະນຸດດ້ວຍການສືບຂ່າວລັບ. ການກະກຽມຄະດີທີ່ສົມບູນແບບ ລວມມີ ການສືບຂ່າວລັບ, ການເຝົ້າລະວັງ ແລະທຸກຂໍ້ມູນທາງເອເລັກໂຕຼນິກທີ່ມີ ເປັນສິ່ງສຳຄັນໃນການທຳຄວາມເຂົ້າໃຈແຈ້ງ ແລະ ຕ້ານເຄືອຂ່າຍອາດຊະຍາກອນ, ບໍ່ວ່າ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈະຫຼາຍຂຶ້ນຫຼືບໍ່ກໍ່ຕາມ. ຊີວິດຂອງຜູ້ຖືກຂູດຮີດ ຫຼື ຄອບຄົວຂອງເຂົາເຈົ້າອາດຕົກໃນອັນຕະລາຍ ຖ້າເຂົາເຈົ້າໃຫ້ການໃນສານ ຖ້າຕ່ອງໂສ້ການຂູດຮີດບໍ່ໄດ້ຖືກທັບມ້າງຢ່າງທ່ອງແທ້. ເປັນສິ່ງທີ່ເຂົ້າໃຈໄດ້ດີວ່າ ຜູ້ຖືກເຄາະຮ້າຍທີ່ ຕ້ອງການໃຫ້ຄວາມຮ່ວມມື ທີ່ກັງວົນກ່ຽວກັບຄວາມປອດໄພ ແລະ ການປົກປ້ອງ ຈະບໍ່ໃຫ້ການເປັນພະຍານຢ່າງເຕັມເມັດເຕັມໜ່ວຍ, ແລະ ຖ້າຄະດີອີງໃສ່ແຕ່ຄຳໃຫ້ການຫຼາຍເກີນໄປ ກໍ່ເປັນໄປໄດ້ສູງທີ່ຈະປະລາໄຊ. ເປັນສິ່ງທີ່ຈະແຈ້ງ ທາງດ້ານຈັນຍາບັນວ່າ ຈະເອົາຜູ້ຖືກເຄາະຮ້າຍໃຫ້ຕົກໃນສະພາບ ທີ່ບໍ່ປອດໄພແບບນັ້ນບໍ່, ໃນກໍລະນີທີ່ ຜົນປະໂຫຍດທີ່ດີສຸດ ຂອງເຂົາເຈົ້າຖືກເປັນສຳຮອງ ລອງຈາກການລົງໂທດຄະດີ. ຖ້າ ຂະແໜງ ຍຸຕິທຳທາງອາຍາ ແລະ ແຮງງານ ໃນອາຊີຕາເວັນອອກສ່ຽງໃຕ້ ໄດ້ຮັບການຊ່ວຍເຫຼືອ ດ້ານເຕັກນິກວິຊາການ ແລະ ການເງິນ ເພື່ອຄວາມພະຍາຍາມໃນການຕ້ານການຄ້າມະນຸດຂອງເຂົາເຈົ້າ ໃຫ້ເປັນໃນເຊີງລຸກຫຼາຍຂຶ້ນ ແລະ ມີແບບການສືບຂ່າວລັບ, ພວກເຮົາສາມາດຄາດຫວັງຫຼາຍຂຶ້ນກ່ຽວກັບ ການມີຄວາມເຄົາລົບສິດທິຂອງຜູ້ຖືກເຄາະຮ້າຍ, ການເພີ່ມຄວາມປອດໄພຂອງ ຜູ້ຖືກເຄາະຮ້າຍ, ການປັບປຸງສະພາບໃນບ່ອນເຮັດວຽກ ແລະ ແຮງງານ, ພ້ອມທັງ ການເພີ່ມການລົງໂທດຜູ້ຄ້າມະນຸດ ແລະ ຜູ້ຂູດຮີດ, ລວມທັງ ການລົງໂທດຕ່ອງໂສ້ອາດຊະຍາກຳແບບມີການຈັດຕັ້ງ.

---

**ສຳລັບຂໍ້ມູນຂ່າວສານເພີ່ມເຕີມ ກ່ຽວກັບ SIREN ຂອງໂຄງການ UNIAP ຂໍເຊີນເຂົ້າເບິ່ງໃນ ເວັບໄຊ**

[www.no-trafficking.org](http://www.no-trafficking.org)